ຜ-ຟຟລ ນຳພາທະນາຄານທຸລະກິດ ແລະ ບໍລິສັດຫຼັກຊັບ ເຂົ້າຢ້ຽມຢາມ ເຂື່ອນໄຟຟ້າຂອງ ຜ-ຟຟລ ປະຈຳປີ 2025



ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ນຳພາບັນດາທະນາຄານທຸລະກິດ ແລະ ບໍລິສັດຫຼັກຊັບ ຈຳນວນ 6 ພາກສ່ວນ ເຂົ້າຢ້ຽມຢາມ ເຂື່ອນໄຟຟ້ານ້ຳຄານ3 ແລະ ເຂື່ອນໄຟຟ້າໄຊຍະບູລີ ໃນລະຫວ່າງ ວັນທີ 04-06 ທັນວາ 2025 ທີ່ຜ່ານມາ.



ໃນການຢ້ຽມຢາມຄັ້ງນີ້ ນຳໂດຍ ທ່ານ ດາວວຽງ ສຸນັນທະລາດ ຮອງຜູ້ອຳນວຍການໃຫຍ່ ສາຍງານພັດທະນາທຸລະກິດ ຜ-ຟຟລ ພ້ອມດ້ວຍ ຄະນະຮັບຜິດຊອບ, ໂດຍໄດ້ມີການນຳພາເຂົ້າຮ່ວມຮັບຟັງ ການນຳສະເໜີກ່ຽວກັບການດຳເນີນງານ ແລະ ເຂົ້າຢ້ຽມຊົມໂຮງຈັກຜະລິດໄຟຟ້າ ຂອງທັງສອງເຂື່ອນ.

ການເຂົ້າຢ້ຽມຢາມ ເຂື່ອນໄຟຟ້າຂອງ ຜ-ຟຟລ ໃນປີນີ້ ແມ່ນຈັດຂຶ້ນເພື່ອສ້າງສາຍພົວພັນອັນດີ ແລະ ສ້າງຄວາມເຊື່ອໝັ້ນ ໃຫ້ກັບພາກສ່ວນພາຍນອກທີ່ສະໜັບສະໜູນ ຜ-ຟຟລ ມາໂດຍຕະຫຼອດ.